ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

---

ສໍານັກງານປົກຄອງແຂວງຄໍາມ່ວນ

ເລກທີ 07...../ຈຂ/ຄມ

ຄໍາມ່ວນ, ວັນທີ 17 ທັນວາ 2015

## ຄໍາແນະນໍາ

## ຂອງເຈົ້າແຂວງໆ ຄໍາມ່ວນ

## ວ່າດ້ວຍການຄຸ້ມຄອງການຄ້ຽນຖ່າຍສິນຄ້າຢູ່ດ່ານສາກົນພາຍໃນແຂວງຄໍາມ່ວນ

ເຖິງ: ບັນດາ ທ່ານເຈົ້າເມືອງ,ຫົວໜ້າພະແນກການ , ຫົວໜ້າດ່ານສາກົນ,ຫົວໜ້າດ່ານພາສີ ປະຈໍາດ່ານສາກົນ, ບັນດາບໍລິສັດຂົນສົ່ງ, ຜູ້ປະກອບການແລະພາກສ່ວນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າ ທີ່ນໍາເຂົ້າ-ສົ່ງອອກຜ່ານດ່ານພາສີສາກົນ ແຂວງຄໍາມ່ວນ.

ເລື່ອງ: ໃຫ້ນໍາເອົາລົດຂົນສົ່ງສິນຄ້າເຂົ້າ-ອອກ ຜ່ານດ່ານສາກົນຢູ່ແຂວງຄໍາມ່ວນ ເຂົ້າກວດກາ, ຍົກຍໍຄ້ຽນຖ່າຍສິນຄ້າ ຫຼື ຝາກສາງ ແລະ ຊັ່ງນໍ້າໜັກ ຢູ່ລະບົບສາງຂອງດ່ານສາກົນ ນາເພົ້າ-ຈາຫລໍ ແລະ ດ່ານສາກົນຂົວມິດຕະພາບ 3 ຄໍາມ່ວນ-ນະຄອນພະນົມ;

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມ ສັນຍາການຂົນສົ່ງສິນຄ້າຜ່ານແດນ ລະຫວ່າງປະເທດ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ລາຊະອານາຈັກໄທ ແລະ ສາທາລະນະລັດສັງຄົມນິຍົມ ຫວຽດນາມຄັ້ງວັນທີ: 26 ພະຈິກ 1999 ທີ່ນະນອນຫຼວງວຽງຈັນ ສປປ ລາວ.
- ອີງຕາມໜັງສືສະເໜີຂອງຫົວໜ້າດ່ານສາກົນ ແຂວງຄໍາມ່ວນສະບັບເລກທີ182 /ດສກ, ລົງວັນທີ 19 ຕຸລາ 2015.

- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ່ 11 ພະຈິກ 2015 ກ່ຽວກັບການນໍາເຂົ້າ-ສົ່ງອອກ, ການຍົກຍໍ້ຖ່າຍສິນຄ້າ ຢູ່ໃນລະບົບສາງປະຈໍາດ່ານສາກົນແຂວງຄໍາມ່ວນ.

ປະຈຸບັນດ່ານສາກົນ ແຂວງຄໍາມ່ວນໄດ້ມີລະບົບສາງສິນຄ້າ, ລານຈອດເພື່ອກວດກາສິນຄ້າຜ່ານແດນການຍົກຍໍ້ຖ່າຍສິນຄ້າ, ຝາກສາງ ແລະ ການຕິດຊັ່ງນໍ້າໜັກ ຕາມລະບຽບກົດໝາຍ.

## ເຈົ້າແຂວງ ຄໍາມ່ວນ ອອກຄໍາແນະນໍາ ດັ່ງນີ້:

1. ໃຫ້ບັນດາບໍລິສັດຂົນສົ່ງ, ຜູ້ປະກອບການແລະພາກສ່ວນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າແລະເຄື່ອງຂອງທຸກຊະນິດທີ່ນໍາໃຊ້ລົດຂົນສົ່ງສິນຄ້າເຂົ້າ-ສົ່ງອອກຜ່ານດ່ານສາກົນນາເພົ້າ-ຈາຫລໍ ແລະ ດ່ານສາກົນຂົວມິດຕະພາບ 3 ຄໍາມ່ວນ-ນະຄອນພະນົມ ເຂົ້າມາຄ່ຽນຖ່າຍສິນຄ້າຢູ່ໃນລະບົບສາງຂອງດ່ານສາກົນທັງສອງແຫ່ງທີ່ກ່າວມາຂ້າງເທິງນັ້ນ.
2. ການເກັບຄ່າທໍານຽມແລະຄ່າບໍລິການຂອງລັດວິສາຫະກິດ ລາວບໍລິການສິນຄ້າຜ່ານແດນ ໃນການນໍາເຂົ້າ-ສົ່ງອອກ ຫາກເກັບຢູ່ສາງ ດ່ານສາກົນຂົວມິດຕະພາບ 3 ຄໍາມ່ວນ-ນະຄອນພະນົມ ແລ້ວ ຈະບໍ່ໃຫ້ເກັບຢູ່ດ່ານສາກົນນາເພົ້າ-ຈາຫລໍ ຊໍ້າອອກອີກ, ກົງກັນຂ້າມ ຖ້າເກັບຄ່າທໍານຽມແລະຄ່າບໍລິການຢູ່ດ່ານສາກົນນາເພົ້າ-ຈາຫລໍແລ້ວ ບໍ່ໃຫ້ເກັບຢູ່ດ່ານສາກົນຂົວມິດຕະພາບ 3 ຄໍາມ່ວນ-ນະຄອນພະນົມອີກ ( ບໍ່ໃຫ້ເກັບຊໍ້າຊ້ອນ )ນອກຈາກ ມີການຍົກຍໍ້-ຄ່ຽນຖ່າຍສິນຄ້າ ຫຼື ຝາກສາງ ແລະ ຕິດຊັ່ງນໍ້າໜັກ, ເຊິ່ງໃຫ້ປະຕິບັດຕາມແຈ້ງການຂອງກະຊວງອຸດສາຫະກໍາແລະການຄ້າສະບັບເລກທີ 1291/ກຄ.ພນ, ລົງວັນທີ 05 ສິງຫາ 2008 ແລະ ຕາມບົດບັນທຶກກອງປະຊຸມກະກຽມເປີດບໍລິການນໍາໃຊ້ລະບົບສາງພັກສິນຄ້າຜ່ານແດນຢູ່ດ່ານສາກົນນາເພົ້າຄັ້ງວັນທີ 18 ທັນວາ 2014 ລາຍລະອຽດຕ່າງໆມີຄືດັ່ງລຸ່ມນີ້:

ກ.ດ່ານສາກົນຂົວມິດຕະພາບ 3 ຄໍາມ່ວນ-ນະຄອນພະນົມ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ ຄິດໄລ່ | ລາຄາ ຄິດໄລ່ | ໝາຍເຫດ |
|---|---|---|---|---|
| 01 | ຫົວໜ່ວຍຄິດໄລ່ ເປັນເງິນໂດລາ ( $ )ແຕ່ເກັບເປັນເງິນກີບຕາມອັດຕາແລກປ່ຽນຂອງທະນາຄານໃນວັນນັ້ນ. | | | |
| | ❖ ອັດຕາຄິດໄລ່ຄ່າລານຈອດລົດເພື່ອກວດກາຂອງເຈົ້າໜ້າທີ່ພາສີຂາເຂົ້າ | | | |
| | - ລົດ 04 ລໍ້ | ຖ້ຽວ/ຄັນ | 3.04 | |

| | | | | |
|---|---|---|---|---|
| | - ລົດ 06 ລໍ້ | ຖ້ຽວ/ຄັນ | 3.89 | |
| | - ລົດ 10 ລໍ້ | ຖ້ຽວ/ຄັນ | 4.58 | |
| | - ລົດ 12 ລໍ້ | ຖ້ຽວ/ຄັນ | 6.41 | |
| | - ລົດພ່ວງ, ລົດເທນເລີ | ຖ້ຽວ/ຄັນ | 7.60 | |
| 02 | ອັດຕາຄິດໄລ່ ຂາອອກ ເປັນເງິນກີບ ( LAK ) | | | |
| | ❖ ອັດຕາຄິດໄລ່ຄ່າລານຈອດລົດເພື່ອກວດກາຂອງເຈົ້າໜ້າທີ່ພາສີຂາອອກ | | | |
| | - ລົດ 04 ລໍ້ | ຖ້ຽວ/ຄັນ | 3,000 | |
| | - ລົດ 06 ລໍ້ | ຖ້ຽວ/ຄັນ | 9,000 | |
| | - ລົດ 10 ລໍ້ | ຖ້ຽວ/ຄັນ | 9,000 | |
| | - ລົດ 12 ລໍ້ | ຖ້ຽວ/ຄັນ | 11,000 | |
| | - ລົດພ່ວງ, ລົດເທນເລີ | ຖ້ຽວ/ຄັນ | 13,000 | |
| | ❖ ອັດຕາຄິດໄລ່ຄ່າຝາກສາງ ພາຫະນະຕ່າງໆ (ລົດ) | | | |
| | - ລົດ 04 ລໍ້ | ຄັນ/ວັນ | 7,500 | |
| | - ລົດ 06 ລໍ້ | ຄັນ/ວັນ | 12,000 | |
| | - ລົດ 10 ລໍ້ | ຄັນ/ວັນ | 12,000 | |
| | - ລົດ 12 ລໍ້ | ຄັນ/ວັນ | 17,000 | |
| | - ລົດພ່ວງ, ລົດເທນເລີ | ຄັນ/ວັນ | 17,000 | |
| | ❖ ອັດຕາຄິດໄລ່ຄ່າຝາກສາງ ສິນຄ້າທົ່ວໄປ | | | |
| | ▪ ແຕ່ 01 ວັນຫາ 15 ວັນ | | | |
| | - ຄິດໄລ່ຕາມບໍລິມາດ | ແມັດກ້ອນ/ວັນ | 190 | |
| | ▪ ແຕ່ 15 ວັນຫາ 30 ວັນ | | | |
| | - ຄິດໄລ່ຕາມບໍລິມາດ | ແມັດກ້ອນ/ວັນ | 230 | |
| | ▪ ແຕ່ 01ເດືອນ ຂຶ້ນໄປ | | | |

| | | | | |
|---|---|---|---|---|
| | - ຄິດໄລ່ຕາມບໍລິມາດ | ແມັດກ້ອນ/ ວັນ | 280 | |
| 03 | ຫົວໜ່ວຍຄິດໄລ່ຄ່າຍົກຍໍ-ຄຸ່ງນຖ່າຍຕູ້ຄອນເທເນີ້ ດ້ວຍກົນຈັກ, ເຄຣນ ເປັນເງິນ ສະກຸນບາດ ( BATH )ແຕ່ເກັບເປັນເງິນກີບຕາມອັດຕາແລກປ່ຽນຂອງທະນາຄານ ໃນວັນນັ້ນ. | | | |
| | - ຄ່າຄຸ່ງນຖ່າຍຕູ້ຄອນເທເນີ້ ຕູ້ເຕັມ | ຄັນ | 1,800 | |
| | - ຄ່າຄຸ່ງນຖ່າຍຕູ້ຄອນເທເນີ້ ຕູ້ເປົ່າ | ຄັນ | 800 | |
| 04 | ອັດຕາຄິດໄລ່ຄ່າແບກຫາມດ້ວຍແຮງງານກຳມະກອນເປັນເງິນກີບ (LAK ) | | | |
| | - ຄິດໄລ່ເປັນຄັນ ເທນເລີ | ຄັນ | 800,000 | |
| | - ຄິດໄລ່ເປັນໂຕນ | ໂຕນ | 15,000 | |

ສ່ວນລາຍລະອຽດຕ່າງໆແມ່ນ ອີງຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ1291/ກຄ.ພນ, ລົງວັນທີ 05 ສິງຫາ 2008

## ຂ. ດ່ານສາກົນນາເພົ້າ-ຈາຫລໍ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ ຄິດໄລ່ | ລາຄາ ຄິດໄລ່ | ໝາຍເຫດ |
|---|---|---|---|---|
| 01 | ອັດຕາຄິດໄລ່ຄ່າລານຈອດລົດເພື່ອກວດກາຂອງເຈົ້າໜ້າທີ່ພາສີ ເປັນເງິນກີບ ( LAK) | | | |
| | ❖ອັດຕາຄິດໄລ່ ລົດແກ່ສິນຄ້າທົ່ວໄປ | | | |
| | - ລົດ 04 ລໍ້ | ຖ້ຽວ/ຄັນ | 50,000 | |
| | - ລົດ 06 ລໍ້ | ຖ້ຽວ/ຄັນ | 80,000 | |
| | - ລົດ 10 ລໍ້ | ຖ້ຽວ/ຄັນ | 80,000 | |
| | - ລົດ 12 ລໍ້ ຂຶ້ນໄປ | ຖ້ຽວ/ຄັນ | 120,000 | |
| | ❖ ອັດຕາຄິດໄລ່ຄ່າຜ່ານສາງລົດແກ່ສິນຄ້າປະເພດແຮ່ທາດຕ່າງໆ | | | |
| | - ລົດພ່ວງ, ລົດເທນເລີ | ຖ້ຽວ/ຄັນ | 80,000 | |
| | ❖ ອັດຕາຄິດໄລ່ຄ່າຝາກສາງປະເພດພາຫະນະຕ່າງໆ (ລົດ) | | | |

| | | | | |
|---|---|---|---|---|
| | - ລົດ 04 ລໍ້ | ຄັນ/ວັນ | 7,500 | |
| | - ລົດ 06 ລໍ້ | ຄັນ/ວັນ | 12,000 | |
| | - ລົດ 10 ລໍ້ | ຄັນ/ວັນ | 12,000 | |
| | - ລົດ 12 ລໍ້ | ຄັນ/ວັນ | 17,000 | |
| | - ລົດພ່ວງ, ລົດເທນເລີ | ຄັນ/ວັນ | 17,000 | |
| 02 | ຫົວໜ່ວຍຄິດໄລ່ຄ່າຍົກຍໍ-ຄຸ່ງນຖ່າຍຕູ້ຄອນເທເນີ້ ດ້ວຍກົນຈັກ, ເຄຣນເປັນເງິນສະກຸນບາດ ( BATH ) ແຕ່ເກັບເປັນເງິນກີບຕາມອັດຕາແລກປ່ຽນຂອງທະນາຄານໃນວັນນັ້ນ. | | | |
| | - ຄ່າຄຸ່ງນຖ່າຍຕູ້ຄອນເທເນີ້ ຕູ້ເຕັມ | ຄັນ | 1,800 | |
| | - ຄ່າຄຸ່ງນຖ່າຍຕູ້ຄອນທີເນີ້ ຕູ້ເປົ່າ | ຄັນ | 800 | |
| 03 | ອັດຕາຄິດໄລ່ຄ່າແບກຫາມດ້ວຍແຮງງານກຳມະກອນ ເປັນເງິນກີບ (LAK ) | | | |
| | - ລົດ 04 ລໍ້ | ຄັນ | 150,000 | |
| | - ລົດ 06 ລໍ້ | ຄັນ | 300,000 | |
| | - ລົດ 10 ລໍ້ | ຄັນ | 400,000 | |
| | - ລົດ 12 ລໍ້ | ຄັນ | 600,000 | |
| | - ລົດພ່ວງ, ລົດເທນເລີ | ຄັນ | 800,000 | |
| 04 | ອັດຕາຄິດໄລ່ຄ່າຕິດຊັ່ງນໍ້າໜັກ ເປັນເງິນກີບ ( LAK) | | | |
| | - ຄິດໄລ່ຄ່າຕິດຊັ່ງ (ນໍ້າໜັກລົດ+ນໍ້າໜັກ ສິນຄ້າ) | ໂຕນ | 400 | |

3. ສຳລັບການຄຸ້ມຄອງຈຸດພັກລົດ ຕາມທາງເລກທີ່ 13 ໄຕ້ ແລະ ຈຸດອື່ນໆ ໃນຂອບເຂດແຂວງຄຳມ່ວນ ແມ່ນ ຕ້ອງຂໍອະນຸຍາດຈາກພະແນກ ໂຍທາທິການ ແລະ ຂົນສົ່ງ ຕາມລະບຽບກົດໝາຍ (ໝາຍຄວາມວ່າ ບໍ່ອະນຸຍາດໃຫ້ໄຊ້ເປັນບ່ອນ ຍົກຕູ້ບັນທຸກສິນຄ້າຂຶ້ນລົງ ແລະ ປ່ຽນຖ່າຍ ສິນຄ້າຜ່ານແດນສາກົນຢ່າງເດັດຂາດ)
4. ສຳລັບການຄຸ່ງນຖ່າຍສິນຄ້າປະເພດແຮ່ທາດຂອງບໍລິສັດພູເບ້ຍມາຍນິ້ງຕໍ່ໄປແມ່ນໃຫ້ເຂົ້າມາຄຸ່ງນຖ່າຍຢູ່ລະບົບສາງຂອງລັດວິສາຫະກິດລາວບໍລິການສິນຄ້າຜ່ານແດນຄືກັບສິນຄ້າຂອງບໍລິສັດອື່ນໆ, ສ່ວນຈຸດຄຸ່ງນຖ່າຍ ຫຼື ຈຸດພັກລົດຢູ່ເຂດບ້ານໂພນສະອາດ ( ຫລັກ 4 ) ເມືອງທ່າ

ແຂກ ແລະ ຢູ່ເຂດບ້ານຫຼັງຄັງເມືອງບົວລະພາກໍ່ໃຫ້ນໍາໃຊ້ເປັນບ່ອນພັກລົດເທົ່ານັ້ນບໍ່ອະນຸຍາດໃຫ້ນໍາໃຊ້ເປັນບ່ອນຄຸ່ງນຖ່າຍສິນຄ້າຢ່າງເດັດຂາດ.

5. ໃຫ້ເຈົ້າໜ້າທີ່ພາສີປະຈໍາດ່ານສາກົນພາຍໃນແຂວງຄໍາມ່ວນ ແຈ້ງໃຫ້ບັນດາບໍລິສັດ, ຜູ້ປະກອບການ ແລະ ໜ່ວຍງານທີ່ກ່ຽວຂ້ອງຊາບຕາມແຈ້ງການສະບັບນີ້ຢ່າງທົ່ວເຖິງ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

6. ມອບໃຫ້ ບັນດາ ອົງການປົກຄອງເມືອງທີ່ມີດ່ານສາກົນຕັ້ງຢູ່ໄດ້ອໍານວຍຄວາມສະດວກໃຫ້ເຈົ້າໜ້າທີ່ກ່ຽວຂ້ອງໃນການປະຕິບັດຄໍາແນະນໍາສະບັບນີ້ໃຫ້ໄດ້ຮັບຜົນດີ.

7. ຜ່ານການຈັດຕັ້ງປະຕິບັດມີຂໍ້ສະດວກ ແລະ ຫຍຸ້ງຍາກແນວໃດໃຫ້ບັນດາດ່ານສາກົນພາຍໃນແຂວງລາຍງານ ການນໍາແຂວງຄໍາມ່ວນ ຊາບເພື່ອພິຈາລະນາແລະຊີ້ນໍາການຈັດຕັ້ງປະຕິບັດທັນເວລາ.

8. ຄໍາແນະນໍາສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ 15 ວັນ;

ຄໍາສັ່ງ, ຄໍາແນະນໍາ, ຂໍ້ຕົກລົງ ແລະ ແຈ້ງການໃດ ທີ່ອົງການປົກຄອງແຂວງຄໍາມ່ວນປະກາດໃຊ້ຜ່ານມາທີ່ຂັດກັບຄໍາແນະນໍາສະບັບນີ້ລ້ວນແຕ່ຖືກຍົກເລີກ;

ຄໍາແນະນໍາສະບັບນີ້ພິມອອກເປັນ ສອງພາສາຄື: ພາສາລາວ ແລະ ອັງກິດ ມີຄຸນຄ່າເທົ່າກັນ.

ບ່ອນສົ່ງ:

- ທ່ານ ຮອງເຈົ້າແຂວງ
- ພະແນການຕ່າງໆ
- ອົງການປົກຄອງເມືອງຕ່າງໆ
- ຄະນະ ຫ້ອງວ່າການປົກຄອງແຂວງ
- ດ່ານສາກົນ ແລະ ຜູ້ປະກອບການ
- ລົງໃນຈົດໝາຍເຫດທາງລັດຖະການ
- ສໍານວນເກັບມ້ຽນ

ເຈົ້າແຂວງຄໍາມ່ວນ

ບຸນມີ ພິມມະສອນ